ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
---===000===---

LAO WORLD
PUBLIC COMPANY
ຮ່ວມມືກັນ, ເຮົາສ້າງໂລກໄດ້

ເລກທີ: 247 -/ລວມຊ.
ນະຄອນຫຼວງວຽງຈັນ, ວັນທີ: 11 MAY 2022

ຮຽນ : ທ່ານຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ;
: ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫລັກຊັບລາວ;
: ທ່ານຜູ້ຖືຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ;
ເລື່ອງ: ການປ່ຽນ ຄະນະຜູ້ອຳນວຍການ ບໍລິສັດ ລາວເວີນ ມະຫາຊົນ.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມຂໍ້ຕົກລົງຂອງ ບໍລິສັດ ລາວເວີນ ມະຫາຊົນ, ສະບັບເລກທີ 0095-22/ລວມຊ-ບກ, ລົງວັນທີ 16 ມີນາ 2022.
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຂອງບໍລິສັດ ລາວເວີນ ມະຫາຊົນ, ສະບັບເລກທີ 0177-22/ລວມຊ-ບກ , ລົງວັນທີ 06 ເມສາ 2022.

ບໍລິສັດ ລາວເວີນ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ບໍລິສັດ ລາວເວີນ ມະຫາຊົນ ໄດ້ມີການແຕ່ງຕັ້ງ ຄະນະອຳນວຍການ ຜູ້ໃໝ່ ເພື່ອປ່ຽນແທນຄະນະອຳນວຍການຜູ້ເກົ່າ ທີ່ໄດ້ລາອອກໄປ, ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານວຽກງານເປັນໄປຢ່າງຕໍ່ເນື່ອງ ແລະ ສາມາດດຳເນີນທຸລະກິດຕາມແຜນທີ່ວາງໄວ້, ເຊິ່ງມີລາຍລະອຽດລຸ່ມນີ້:

1. ຮັບຮອງເອົາການລາອອກ **ທ່ານ ນາງ ສີພອນຄຳ ດວງດາລາ** ຈາກຕຳແໜ່ງ ຮອງປະທານ ສະພາບໍລິຫານ ບໍລິສັດ ລາວເວີນ ມະຫາຊົນ ມາຮັບຕຳແໜ່ງໃຫມ່ ແຕ່ງຕັ້ງເປັນ ຜູ້ອຳນວຍການໃຫຍ່ ບໍລິສັດ ລາວເວີນ ມະຫາຊົນ (ຜູ້ໃໝ່) ແທນຜູ້ເກົ່າ **ທ່ານ ສີບຸນທຳ ສີບຸນມີ** ທີ່ໄດ້ລາອອກໄປ.
2. ແຕ່ງຕັ້ງ **ທ່ານ ນາງ ນິພາພອນ ບັນດາວົງ** ເປັນ ຮອງຜູ້ອຳນວຍການໃຫຍ່ ຝ່າຍບໍລິຫານ ແລະ ບຸກຄະລາກອນ (ຜູ້ໃໝ່) ບໍລິສັດ ລາວເວີນ ມະຫາຊົນ ເພື່ອປ່ຽນແທນຜູ້ເກົ່າ **ທ່ານ ສົມຄິດ ວິຈາວົງ** ທີ່ໄດ້ລາອອກໄປ.
3. ແຕ່ງຕັ້ງ **ທ່ານ ນາງ ລຳເງິນ ມາດມະນີວົງ** ເປັນ ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ (ຜູ້ໃໝ່) ບໍລິສັດ ລາວເວີນ ມະຫາຊົນ ເພື່ອປ່ຽນແທນຜູ້ເກົ່າ **ທ່ານ ຄຳເຟືອງ ດວງບຸດດີ** ທີ່ໄດ້ລາອອກໄປ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ,

ບໍລິສັດ ລາວເວີນ ມະຫາຊົນ
ປະທານ ສະພາບໍລິຫານ

ບໍລິສັດ ລາວເວີນ ມະຫາຊົນ LAO WORLD PUBLIC COMPANY

ທັດນະຄອນ ທຳມະວົງ

Scanned with CamScanner